## 01

## ຄ່າແຮງງານ ແລະ ການຫັກເງິນຄ່າແຮງງານ

- ຕ້ອງຈ່າຍເດືອນລະຄັ້ງໂດຍການໂອນຜ່ານທະນາຄານ/ການຈ່າຍເງິນເອເລັກໂຕຣນິກ.
- ຕ້ອງຊໍາລະຢ່າງໜ້ອຍໜຶ່ງຄັ້ງໃນທຸກໆສາມເດືອນສໍາລັບສ່ວນແບ່ງຄ່າຈັບປາ (ຖ້າມີໃຫ້).
- ຄ່າແຮງງານຂັ້ນຕໍ່າໃນປະເທດໄທ (2022) ຢູ່ໃນລະຫວ່າງ 328-354 ບາດຕໍ່ມື້ ຂຶ້ນຢູ່ກັບແຕ່ລະຈັງຫວັດ.
- ຢ່າງໜ້ອຍ ທ່ານຕ້ອງໄດ້ຮັບຄ່າແຮງງານຂັ້ນຕໍ່າ.




## 02

## ຊົ່ວໂມງເຮັດວຽກ ແລະ ກົດລະບຽບໃນການພັກຜ່ອນ

### ການແປຮູບອາຫານທະເລ

- 8 ຊົ່ວໂມງຕໍ່ມື້
- 6 ມື້ຕໍ່ອາທິດ
- ຫຼັງຈາກເຮັດວຽກ ໄດ້ 5 ຊົ່ວໂມງຕິດຕໍ່ກັນ ຕ້ອງໄດ້ພັກຜ່ອນຢ່າງໜ້ອຍ 1 ຊົ່ວໂມງ.

ການເຮັດວຽກກາຍໂມງ/ວຽກລ່ວງເວລາ (OT) ແມ່ນ ການເຮັດວຽກແບບສະໝັກໃຈ. ຊົ່ວໂມງເຮັດວຽກ OT ແລະ ຊົ່ວໂມງເຮັດວຽກໃນວັນພັກ ບໍ່ຄວນເກີນ 36 ຊົ່ວໂມງຕໍ່ອາທິດ.

### ການປະມົງ

- ພັກຜ່ອນ 10 ຊົ່ວໂມງ ພາຍໃນ 24 ຊົ່ວໂມງ ຂອງ ການເຮັດວຽກ (ເຮັດວຽກສູງສຸດບໍ່ເກີນ 14 ຊົ່ວໂມງ: ບໍ່ມີການເຮັດວຽກລ່ວງເວລາ)
- ພັກຜ່ອນຢ່າງໜ້ອຍ 77 ຊົ່ວໂມງຕໍ່ອາທິດ





## 03

## ການຈ່າຍເງິນເຮັດວຽກລ່ວງເວລາ ແລະ ວັນພັກ

### ການແປຮູບອາຫານທະເລ

- ສໍາລັບຊົ່ວໂມງເຮັດວຽກລ່ວງເວລາ (OT) ໃນມື້ເຮັດວຽກ, ຜູ້ໃຊ້ແຮງງານຕ້ອງຈ່າຍເງິນໃຫ້ທ່ານບໍ່ຕໍ່າກວ່າອັດຕາ 1.5 ເທົ່າ ຂອງ ຄ່າແຮງງານປົກກະຕິຂອງທ່ານ.
- ຖ້າທ່ານເຮັດວຽກໃນວັນພັກ, ຜູ້ໃຊ້ແຮງງານ ຕ້ອງຈ່າຍເງິນຄ່າແຮງງານໃຫ້ທ່ານສອງທົບ.
- ສໍາລັບຊົ່ວໂມງເຮັດວຽກລ່ວງເວລາໃນວັນພັກ, ຜູ້ໃຊ້ແຮງງານ ຕ້ອງຈ່າຍເງິນຄ່າແຮງງານໃຫ້ທ່ານ 3 ທົບ ຂອງ ຄ່າແຮງງານຂອງທ່ານ.

### ການປະມົງ

- ບໍ່ມີການຈ່າຍເງິນໃນການເຮັດວຽກລ່ວງເວລາ.

## 04

## ຄວາມປອດໄພ ແລະ ສຸຂະພາບແຮງງານ



ຜູ້ໃຊ້ແຮງງານ ຕ້ອງສະໜອງອຸປະກອນ ແລະ ມີມາດຕະການປົກປ້ອງຄວາມປອດໄພທີ່ພຽງພໍໃຫ້ແກ່ຜູ້ອອກແຮງງານທີ່ເຮັດວຽກກ່ຽວກັບເຄື່ອງຈັກ, ເຄື່ອງໄຟຟ້າ ຫຼື ເຮັດວຽກຢູ່ໃນພື້ນທີ່ຈໍາກັດ.

## 05

## ວັນພັກເຈັບເປັນ (ບໍ່ແມ່ນຍ້ອນການເຈັບເປັນຈາກການເຮັດວຽກ ຫຼື ອຸປະຕິເຫດແຮງງານ)



- ເມື່ອທ່ານເຈັບເປັນ ທ່ານມີສິດໄດ້ຮັບວັນພັກເຈັບເປັນ.
- ຈໍານວນວັນພັກເຈັບເປັນທີ່ໄດ້ຮັບຄ່າແຮງງານແມ່ນ 30 ວັນເຮັດວຽກປົກກະຕິຕໍ່ປີ.
- ຜູ້ໃຊ້ແຮງງານ ອາດຈະຮຽກຮ້ອງໃຫ້ທ່ານມີໃບຢັ້ງຢືນຈາກແພດ ສໍາລັບ ວັນພັກເຈັບເປັນທີ່ຫຼາຍກວ່າ 3 ວັນ.



## 06

## ວັນພັກອອກລູກ

- ບໍ່ຄວນມີການກວດການຖືພາ.
- ທ່ານບໍ່ຄວນເຮັດວຽກທີ່ອາດເຮັດໃຫ້ທ່ານບາດເຈັບ ຫຼື ໝົດແຮງ ຖ້າທ່ານຖືພາ.
- ທ່ານສາມາດເອົາວັນພັກອອກລູກໄດ້ບໍ່ເກີນ 98 ວັນ.
- ວັນພັກອອກລູກ 98 ວັນນັ້ນ ທ່ານຈະໄດ້ຮັບຄ່າແຮງງານ 45 ວັນ.
- ເມື່ອທ່ານຖືພາ ທ່ານບໍ່ຄວນເຮັດວຽກໃນຊ່ວງ 10 ໂມງແລງ ຫາ 6 ໂມງເຊົ້າ, ເຮັດວຽກລ່ວງເວລາ, ຫຼື ເຮັດວຽກໃນວັນພັກ.
- ຜູ້ໃຊ້ແຮງງານ ບໍ່ສາມາດຢຸດສັນຍາເຮັດວຽກ ຂອງທ່ານໄດ້ ເມື່ອທ່ານຖືພາ.

## 07

## ວັນພັກປະຈໍາປີ

### ການແປຮູບອາຫານທະເລ

ຖ້າທ່ານໄດ້ເຮັດວຽກຢ່າງຕໍ່ເນື່ອງເປັນເວລາ 1 ປີເຕັມ, ທ່ານມີສິດທີ່ຈະໄດ້ຮັບຄ່າແຮງງານສໍາລັບວັນພັກບຸນປະເພນີ ບໍ່ຕໍ່າກວ່າ 6 ວັນເຮັດວຽກ.

### ການປະມົງ

ທ່ານມີວັນພັກປະຈໍາປີທີ່ໄດ້ຮັບຄ່າແຮງງານຢ່າງຫນ້ອຍ 30 ວັນ ແທນວັນພັກປະຈໍາອາທິດ ແລະ ວັນພັກບຸນປະເພນີ. ຖ້າທ່ານຕ້ອງໄດ້ເຮັດວຽກໃນໄລຍະວັນພັກ ຜູ້ໃຊ້ແຮງງານ ຕ້ອງໄດ້ຈ່າຍເງິນຄ່າແຮງງານໃຫ້ທ່ານຢ່າງໜ້ອຍສອງທົບ.



## 08

## ວັນພັກບຸນປະເພນີ

### ການແປຮູບອາຫານທະເລ

- ທ່ານຄວນຈະໄດ້ຮັບຄ່າແຮງງານໃນວັນພັກບຸນປະເພນີຕາມອັດຕາຄ່າແຮງງານປົກກະຕິ ຂອງທ່ານ.
- ທ່ານມີສິດໄດ້ຮັບວັນພັກບຸນປະເພນີ ລວມທັງວັນກໍາມະກອນ 13 ວັນ.
- ທ່ານມີສິດໄດ້ຮັບວັນພັກຊົດເຊີຍໃນມື້ຕໍ່ໄປ ຖ້າວັນພັກບຸນປະເພນີຫາກຖືກວັນພັກປະຈໍາອາທິດ.
- ຜູ້ໃຊ້ແຮງງານ ຕ້ອງຈ່າຍເງິນຄ່າແຮງງານໃຫ້ທ່ານຢ່າງໜ້ອຍສອງເທົ່າຂອງຄ່າແຮງງານ ຖ້າທ່ານບໍ່ໄດ້ຮັບວັນພັກຊົດເຊີຍ.

## 09

## ການຈ່າຍເງິນສິດເຊີຍ (ເງິນຊົດເຊີຍ ສໍາລັບການຢຸດຈ້າງງານ)

ຖ້າຜູ້ໃຊ້ແຮງງານ ໄລ່ທ່ານອອກຈາກວຽກ ຫຼື ປິດທຸລະກິດ, ທ່ານຄວນຈະໄດ້ຮັບເງິນຄ່າຊົດເຊີຍ. ຈໍານວນເງິນຊົດເຊີຍ ແມ່ນຂຶ້ນກັບໄລຍະເວລາຂອງການເຮັດວຽກດັ່ງນີ້:

- 120 ວັນ ແຕ່ຕໍ່າກວ່າ 1 ປີ: 30 ວັນ ຂອງຄ່າແຮງງານ
- 1 ປີ ແຕ່ຕໍ່າກວ່າ 3 ປີ: 90 ວັນ ຂອງຄ່າແຮງງານ
- 3 ປີ ແຕ່ຕໍ່າກວ່າ 6 ປີ: 180 ວັນ ຂອງຄ່າແຮງງານ
- 6 ປີ ແຕ່ຕໍ່າກວ່າ 10 ປີ: 240 ວັນ ຂອງຄ່າແຮງງານ
- ຫຼາຍກວ່າ 10 ປີ: 300 ວັນ ຂອງຄ່າແຮງງານ

ທ່ານຕ້ອງໄດ້ເຮັດວຽກຕິດຕໍ່ກັນເປັນໄລຍະເວລາ 120 ວັນ ຈຶ່ງຈະໄດ້ຮັບເງິນຊົດເຊີຍ.



SHIP TO SHORE RIGHTS SOUTH EAST ASIA | International Labour Organization | Funded by the European Union

## ໂຄງການຮັບປະກັນສິດທິແຮງງານແຕ່ເຮືອຮອດຝັ່ງ ຂອງ ອາຊີຕາເວັນອອກສຽງໃຕ້

ສົ່ງເສີມການເຄື່ອນຍ້າຍແຮງງານທີ່ຖືກຕ້ອງ ແລະ ປອດໄພ, ວຽກທີ່ມີຄຸນຄ່າ ແລະ ເປັນທຳ ສຳລັບແຮງງານເຄື່ອນຍ້າຍທັງໝົດ ທີ່ເຮັດວຽກຢູ່ຂະແໜງປະມົງ ແລະ ການແປຮູບອາຫານທະເລ ຢູ່ອາຊີຕາເວັນອອກສຽງໃຕ້

**shiptoshorerights.org**

ຫ້ອງການ ILO ປະຈຳພາກພື້ນ ສຳລັບ ອາຊີ ແລະ ປາຊີຟິກ, ອາຄານ ອົງການ ສປຊ, ລາດສະດຳເນີນນອກ ບາງກອກ 10200, ປະເທດໄທ,

ໂທ: +66 2288 1762 ແຟກ: +66 2280 1735
ເມວ: info@ilo.org ເວບໄຊ: www.ilo.org

# 10
## ສິດໃນການຈັດຕັ້ງກຳມະບານ

- ໃນຖານະເປັນສະມາຊິກກຳມະບານ, ທ່ານສາມາດຮຽກຮ້ອງ ແລະ ຕໍ່ລອງເຈລະຈາ ກັບຜູ້ໃຊ້ແຮງງານ ກ່ຽວກັບຄ່າແຮງງານ, ຜົນປະໂຫຍດ ແລະ ເງື່ອນໄຂການເຮັດວຽກ.
- ແຮງງານເຄື່ອນຍ້າຍຢູ່ປະເທດໄທ ມີສິດທີ່ຈະເຂົ້າຮ່ວມເປັນສະມາຊິກກຳມະບານ ຢູ່ ສະຖານທີ່ເຮັດວຽກ ຫຼື ຢູ່ໃນຂະແໜງເຮັດວຽກດຽວກັນ.
- ຜູ້ໃຊ້ແຮງງານ ບໍ່ສາມາດເຂົ້າມາແຊກແຊງສິດຂອງທ່ານທີ່ຈະເຂົ້າຮ່ວມກຳມະບານ.



**ພວກເຮົາເຂັ້ມແຂງນຳກັນ!**
**ການຈັດຕັ້ງຮ່ວມກັນ**ແມ່ນວິທີດຽວທີ່ຈະສ້າງຄວາມເຂັ້ມແຂງ ແລະ ນຳໃຊ້ສິດຂອງພວກເຮົາ.

ເຄື່ອຂ່າຍສິດທິຊາວປະມົງ
ຈັງຫວັດສົງຂາ
ໂທ: +66 7431 4262

ເຄື່ອຂ່າຍສິດທິຊາວປະມົງ
ຈັງຫວັດຕຣາດ
ໂທ: +66 3951 3500

ເຄື່ອຂ່າຍສິດທິຊາວປະມົງ
ຈັງຫວັດຣະນອງ
ໂທ: +66 7781 0217

ສຳລັບຂໍ້ມູນເພີ່ມເຕີມ
ໂທຫາ SERC
ໂທ: +66 2537 8973

# 11
## ຄຳຮ້ອງຮຽນຂອງຜູ້ອອກແຮງງານ

ໃນເວລາທີ່ທ່ານມີບັນຫາ ກໍ່ມີຫຼາຍວິທີທີ່ຈະໄດ້ຮັບການຊ່ວຍເຫຼືອເຊັ່ນ:

- ຕິດຕໍ່ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງຜູ້ອອກແຮງງານ
- ປຶກສາກັບຫ້ອງການປົກປ້ອງແຮງງານ
- ປຶກສາກັບເຈົ້າໜ້າທີ່ກວດກາແຮງງານ



# 12
## ເຮັດວຽກຢູ່ປະເທດໄທ



- ຖ້າທ່ານຈະເຮັດວຽກຢູ່ເຮືອປະມົງ ທ່ານຕ້ອງມີ ອາຍຸຢ່າງຕ່ຳ 18 ປີ.
- ໃນການໄປເຮັດວຽກຢູ່ປະເທດໄທ ບໍລິສັດ ຈັດຫາງານບໍ່ຄວນເກັບຄ່າທຳນຽມໃດໆນຳທ່ານ.
- ຜູ້ໃຊ້ແຮງງານຂອງທ່ານ ຕ້ອງເຮັດສັນຍາເຮັດວຽກ ເປັນລາຍລັກອັກສອນທີ່ເປັນພາສາລາວ.
- ທ່ານຕ້ອງມີສຳເນົາສັນຍາເຮັດວຽກຕະຫຼອດ ຖ້າທ່ານບໍ່ມີ ຜູ້ໃຊ້ແຮງງານຄວນເອົາໃຫ້ທ່ານ.
- ທ່ານມີສິດໄດ້ຮັບການປະກັນສັງຄົມ ຫຼື ອຸດໜູນ ປະກັນສຸຂະພາບເອກະຊົນ.
- ລູກຂອງທ່ານມີສິດໄດ້ຮັບການສຶກສາ ຢູ່ ປະເທດໄທ. ມີຫຼາຍອົງການຈັດຕັ້ງເຊັ່ນ: ມູນນິທິການສຶກສາ ແລະ ການພັດທະນາ (FED) ສະໜອງການສຶກສາໃຫ້ແກ່ລູກ ຂອງແຮງງານເຄື່ອນຍ້າຍ ແລະ ຜູ້ໃຫຍ່.

# 13
## ບໍ່ອະນຸຍາດໃຫ້ມີການຈຳແນກ

- ທ່ານບໍ່ຄວນໄດ້ຮັບຄ່າແຮງງານທີ່ແຕກຕ່າງກັບຄົນອື່ນຍ້ອນການເປັນຕົວຕົນ ຂອງທ່ານ (ເຊັ່ນ ສັນຊາດ, ເຊື້ອຊາດ, ເພດ, ຫຼື ຄວາມເປັນເພດ)

## #ເຮັດວຽກຢູ່ປະເທດໄທ

**ກະຊວງແຮງງານ**
ສາຍດ່ວນສູນກາງ: 1506/1546/1300
ສາຍດ່ວນແຮງງານເຄື່ອນຍ້າຍ: 1694

**ມູນນິທິການສຶກສາ ແລະ ການພັດທະນາ (FED)**
ສາຍດ່ວນ: +66 62 978 1009

**ມູນນິທິສິດທິມະນຸດ ແລະ ການພັດທະນາ**
ໂທ: +66 86 756 0835

**ເຄືອຂ່າຍສິດທິຊາວປະມົງ**
(ຈັງຫວັດຣະນອງ, ຊຸມພອນ, ສົງຂາ ແລະ ຕຣາດ)
ໂທ: +66 7431 4262
ເວັບໄຊ: justiceforfishers.org

**ມູນນິທິຮັກໄທ (ສະມຸດສາຄອນ)**
ໂທ: +66 3443 4828

**ສູນ ສະເຕວລາ ມາຣິດ ຊີຟາເຣີ (Stella Maris Seafarer)**
ໂທ: +66 81 401 2816

**ສະຫະພັນສາຍພົວພັນແຮງງານລັດວິສາຫະກິດ (SERC)**
ໂທ: +66 86 752 4593

SHIP TO SHORE RIGHTS SOUTH EAST ASIA | International Labour Organization | Funded by the European Union

# ສິດທິແຮງງານໃນຂະແໜງ ການປະມົງ ແລະ ການແປຮູບ ອາຫານທະເລ



shiptoshorerights.org

ໂຄງການ ໄດ້ຮັບການສະໜັບສະໜູນຈາກສະຫະພາບເອີຣົບ.
ເນື້ອໃນຂອງສິ່ງພິມນີ້ ບໍ່ໄດ້ສະທ້ອນເຖິງຄວາມແນວຄວາມຄິດ ຂອງສະຫະພາບເອີຣົບ